**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ນະຄອນຫລວງວຽງຈັນ**

**ຄະນະສະເພາະກິດ** **ເລກທີ 002/ສພກ.ນວ**

**ລົງວັນທີ 9 ເມສາ 2020**

# ຄໍາແນະນໍາ

## ວ່າດ້ວຍການຍົກລະດັບການຈັດຕັ້ງປະຕິບັດ ຄໍາສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.

**ເຖິງ: ທ່ານຫົວໜ້າການເມືອງ ກອງບັນຊາການທະຫານ ນວ, ບັນດາທ່ານເຈົ້າເມືອງ, ທ່ານຜູ້ຮັກສາການຫົວໜ້າກອງບັນຊາການ ປກສ, ຫົວໜ້າພະແນກ-ອົງການ, ນາຍບ້ານ ທົ່ວນະຄອນຫລວງວຽງຈັນ.**

- ອີງຕາມ ຄໍາສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 07/ຄລສພ, ລົງວັນທີ 06 ເມສາ 2020 ວ່າດ້ວຍການເພີ່ມທະວີການນໍາພາຊີ້ນໍາຕໍ່ການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງເຊື້ອພະຍາດຈຸລາໂລກອັກເສບປອດສາຍພັນໃຫມ່ ໂຄວິດ-19;
- ອີງຕາມ ຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 (COVID-19);
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 209/ຈນວ, ລົງວັນທີ 24 ມີນາ 2020 ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ເພື່ອປ້ອງກັນ, ສະກັດກັ້ນ ແລະ ຕອບໂຕ້ພະຍາດອັກເສບປອດຈາກເຊື້ອພະຍາດ COVID 19 ຂັ້ນນະຄອນຫລວງວຽງຈັນ;
- ອີງຕາມ ການຊີ້ນໍາ ຂອງກອງປະຊຸມຖອດຖອນບົດຮຽນ ການຈັດຕັ້ງປະຕິບັດຄໍາສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ແລະ ຄໍາສັ່ງ ຂອງຄະເລຂາທິການສູນກາງພັກ ສະບັບເລກທີ 07/ຄລສພ, ລົງວັນທີ 6 ເມສາ 2020.

ເພື່ອເປັນການສະກັດກັ້ນ ແລະ ປ້ອງກັນ ການແຜ່ລະບາດຂອງເຊື້ອພະຍາດ COVID 19, ທີ່ນັບມື້ນັບເພີ່ມຂຶ້ນ, ທັງໃນບັນດາປະເທດຕ່າງໆ ທົ່ວໂລກ ກໍ່ຄືໃນປະເທດລາວ, ໂດຍສະເພາະໃນນະຄອນຫລວງວຽງຈັນ, ຕາມການລາຍງານ ກໍລະນີຕິດເຊື້ອເພີ່ມຂຶ້ນແຕ່ລະວັນ ແລະ ມີຈໍານວນຜູ້ພົວພັນກັບກໍລະນີຕິດເຊື້ອ ເປັນຈໍານວນຫລວງຫລາຍ ຊຶ່ງອາດເຮັດໃຫ້ກໍລະນີຕິດ ເຊື້ອແຜ່ລາມຂະຫຍາຍວົງ

ກວ້າງອອກ ແລະ ເພື່ອສະກັດກັ້ນ ຈຳກັດ ແລະ ປ້ອງກັນການແຜ່ລະບາດ ຂອງເຊື້ອພະຍາດດັ່ງກ່າວ ໃຫ້ຢູ່ໃນວົງແຄບ ແລະ ຫລຸດລົງກ້າວໄປສູ່ການປອດເຊື້ອພະຍາດດັ່ງກ່າວ.

**ຄະນະສະເພາະກິດ ຂັ້ນນະຄອນຫລວງວຽງຈັນ ອອກຄຳແນະນຳ ດັ່ງນີ້:**

**1. ຈຸດປະສົງ-ຄາດໝາຍ.**

- ເພື່ອຍົກລະດັບການປະຕິບັດ ຄຳສັ່ງ ຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ ໃຫ້ເຂັ້ມແຂງຂຶ້ນກວ່າເກົ່າຄາດໝາຍປະຕິບັດໃຫ້ໄດ້ 95-99%.

- ເພື່ອຈຳກັດວົງແຄບການແຜ່ລະບາດ ຂອງພະຍາດ COVID 19 ໃນນະຄອນຫລວງວຽງຈັນ ແລະ ໃຫ້ເຂົ້າໃຈຢ່າງເປັນເອກະພາບກັນໃນການຈັດຕັ້ງປະຕິບັດ ບັນດາມາດຕະການຕ່າງໆ ບໍ່ແມ່ນເພື່ອສ້າງຄວາມຫຍຸ້ງຍາກໃຫ້ປະຊາຊົນ, ແຕ່ແມ່ນເພື່ອປ້ອງກັນປະຊາຊົນ, ໃຫ້ປະຊາຊົນປອດໄພຈາກພະຍາດ COVID 19 ແລະ ຖ້າປະສົບຜົນສຳເລັດ ກໍ່ສະແດງເຖິງຄວາມຮັບຜິດຊອບຂອງປະຊາຊົນ ຕໍ່ສັງຄົມ, ທີ່ຮັກໂຕເອງ, ຮັກຄອບຄົວ ແລະ ຮັກປະເທດຊາດ.

**2. ເພີ່ມທະວີ ການຈັດຕັ້ງປະຕິບັດບາງມາດຕະການ ໃນຄຳສັ່ງ ເລກທີ 06/ນຍ ດັ່ງນີ້:**

- ຫ້າມບໍ່ໃຫ້ປະຊາຊົນ ອອກຈາກເຮືອນ-ທີ່ພັກອາໄສຕົນເອງ, ໃນຂໍ້ 3 ຂອງຄຳສັ່ງ 06/ນຍ, ຄອບຄົວໜຶ່ງ ກຳນົດໃຫ້ອອກເຮືອນໄປຕະຫລາດ ຫລື ຊື້ເຄື່ອງໃຊ້ຈຳເປັນ 1-2 ຄົນ ຕໍ່ມື້.

**+ *ວິທີການຈັດຕັ້ງປະຕິບັດ:*** ບ້ານ ແລະ ປກສ ບ້ານ ເຮັດສັນຍາກັບແຕ່ລະຄົວເຮືອນ, ອອກບັດຢັ້ງຢືນໃຫ້ (ຍົກເວັ້ນຜູ້ທີ່ໄປປະຕິບັດໜ້າທີ່ ແລະ ເຮັດການຜະລິດກະສິກຳ (ບໍ່ໃຫ້ເກີນ 10 ຄົນ) ແມ່ນຈະມີບັດຕ່າງຫາກ).

- ຫ້າມບຸກຄົນເດີນທາງໄປທ້ອງຖິ່ນອື່ນ, ເຂດທີ່ມີການຕິດເຊື້ອ ຫລື ເຂດທີ່ມີຄວາມສ່ຽງ ຍົກເວັ້ນ ຜູ້ທີ່ໄດ້ຮັບອະນຸຍາດຈາກອົງການປົກຄອງທ້ອງຖິ່ນ, ໃນຂໍ້ 4 ຂອງຄຳສັ່ງ 06/ນຍ, ແມ່ນໃຫ້ຕັ້ງດ່ານເພື່ອກວດສຸຂະພາບ, ກວດເຫັນໃຜເປັນໄຂ້ ໃຫ້ສົ່ງໄປໂຮງໝໍ ບໍ່ໃຫ້ເຂົ້າມາ ນວ, ໃນດ່ານກວດສຸຂະພາບ ໃຫ້ມີປ້າຍຊີ້ບອກການກວດເຊື້ອພະຍາດ; ການກວດກາຕ້ອງສຸມໃສ່ກວດລົດທີ່ສາມາດບັນຈຸຄົນຫລາຍ; ສຳລັບຈຸດບ້ານ ທີ່ມີຄົນຕິດເຊື້ອ ຕ້ອງໄດ້ປິດ (Lockdown), ແນໃສ່ປິດຄອບຄົວທີ່ຕິດເຊື້ອ ກັບຄອບຄົວໃກ້ຄຽງ, ແຕ່ໃຫ້ກຳນົດວົງລັດສະໝີທີ່ຈະຈຳກັດ, ໂດຍໃຫ້ຕັ້ງປ້າຍກຳນົດຈຸດຄັກແນ່, ມີການປ້ອງກັນເວນຍາມອະນຸຍາດຄອບຄົວໜຶ່ງ ສາມາດອອກໄປຊື້ເຄື່ອງໃຊ້ຈຳເປັນ ແລະ ອາຫານການກິນໄດ້ແຕ່ 1 ຄົນ ຕໍ່ມື້ ແລະ ຕ້ອງໃສ່ເຄື່ອງປ້ອງກັນໂຕເອງ.

- ຫ້າມຈັດກິດຈະກຳ, ປະຊຸມ ຫລື ໂຮມຊຸມນຸມຕ່າງໆ ມີຜູ້ເຂົ້າຮ່ວມຫລາຍກວ່າ 10 ຄົນ, ໃນຂໍ້ 7 ຂອງຄຳສັ່ງ 06/ນຍ, ແມ່ນນັບແຕ່ວັນທີ 7 ເມສາ ຫາ ວັນທີ 19 ເມສາ 2020 ບໍ່ໃຫ້ຈັດກິດຈະກຳຫຍັງ; ງົດການຈັດງານປະເພນີ-ທຶດສົງພະປີໃໝ່ລາວ ຕາມແຈ້ງການ ເລກທີ 175/ອພສ, ລົງວັນທີ 7 ເມສາ 2020. ບໍ່ໃຫ້ຫຼິ້ນການພະນັນໃນເຮືອນດີ, ເຮືອນກຳ ຫລື ນັ່ງໃກ້ກັນ, ໄປສົ່ງສະການກໍ່ໃຫ້ຍ່າງ ຫລື ຢູ່ໄກກັນ 2 ແມັດ.

- ສືບຕໍ່ປິດດ່ານປະເພນີ ແລະ ດ່ານທ້ອງຖິ່ນ; ສຳລັບດ່ານສາກົນ ຫ້າມບຸກຄົນເຂົ້າ-ອອກເດັດຂາດ, ອະນຸຍາດໃຫ້ແຕ່ລົດຂົນສົ່ງສິນຄ້າ, ໃນຂໍ້ 8 ຂອງຄຳສັ່ງ 06/ນຍ.

- ໃຫ້ສືບຕໍ່ປິດກິດຈະການບັນເທີງ, ຮ້ານຄາລາໂອເກະ, ຮ້ານອົບນວດ, ສາລາເບຍ...ໃນຂໍ້ 9 ຂອງຄຳສັ່ງ 06/ນຍ, ສະເພາະຮ້ານອາຫານ, ຮ້ານເຝີ-ຮ້ານໝີ່ ໃຫ້ເປີດຂາຍໄດ້ ໃຫ້ຊື້ໄປກິນຢູ່ເຮືອນ ແຕ່ຫ້າມນັ່ງກິນຊຸມກັນ 2 ຄົນຂຶ້ນໄປ.

- ໃຫ້ສືບຕໍ່ກິດຈະການຕະຫລາດກະສິກຳ, ຮ້ານຂາຍເຄື່ອງ, ຮ້ານຄ້າ (ຊຸບເປີມາເກັດ)....ໃນຂໍ້ 10 ຂອງຄຳສັ່ງ 06/ນຍ, ແຕ່ໃຫ້ອອກລະບຽບການຊື້-ຂາຍ ເປັນຕົ້ນ: ລະຫວ່າງຜູ້ຂາຍ ໃຫ້ຢູ່ຫ່າງກັນ 2 ແມັດ ແລະ ມີເຄື່ອງປ້ອງກັນຕົວເອງ, ຜູ້ຊື້ຢູ່ຫ່າງຜູ້ຂາຍ 2 ແມັດ, ບໍ່ໃຫ້ຫຸ້ມກັນ; ສຳລັບຫນ່ວຍກວດກາ ແມ່ນມອບໃຫ້ ປກສ ໄປປະຈຳ ຢູ່ແຕ່ລະຈຸດ.

**3. ກົນໄກການ ແລະ ມາດຕະການຈັດຕັ້ງປະຕິບັດ.**

- ການຕ້ານພະຍາດລະບາດ COVID 19 ແມ່ນຄວາມຮັບຜິດຊອບ ໂດຍກົງຂອງຄະນະສະເພາະກິດ ຂັ້ນນະຄອນຫຼວງວຽງຈັນ, ເມືອງ, ບ້ານ, ສຳນັກງານ-ອົງການ ໂດຍແມ່ນເລຂາພັກຢູ່ແຕ່ລະບ່ອນເປັນຜູ້ກຳກັບໂດຍກົງ, ສະມາຊິກພັກຕ້ອງເປັນແບບຢ່າງ ໃນການປະຕິບັດຂໍ້ຫ້າມຕ່າງໆ.

- ສ້າງແຜນ, ວາງຄາດຫມາຍ, ປະກອບພະນັກງານ, ປະກອບອຸປະກອນຮັບໃຊ້, ສະຫນອງເງື່ອນໄຂຕ່າງໆ ໃຫ້ຜູ້ໄປຈັດຕັ້ງປະຕິບັດ; ສຳລັບງົບປະມານຂັ້ນບ້ານ ແມ່ນໃຫ້ລະດົມຢູ່ບ້ານເຊັ່ນ: ເພີ່ມການເກັບເງິນສະຫນັບສະຫນູນໃຫ້ ກອງຫລອນບ້ານ ຈາກຄອບຄົວລະ 4.000 ກີບຕໍ່ເດືອນເປັນ 10.000 ກີບຕໍ່ເດືອນ.

- ໃຫ້ຄະນະສະເພາະກິດ ແຕ່ລະຂັ້ນ ກວດກາ ການປະຕິບັດຕາມການແບ່ງງານ, ຜູ້ໃດເຮັດໄດ້ດີມີຜົນງານ ຈະໄດ້ຮັບການຍ້ອງຍໍ, ຖ້າໃຜບໍ່ປະຕິບັດ ຕ້ອງລົງວິໄນ, ລົງໂທດຕາມກົດຫມາຍ.

**4.** ບົດແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ຮອງເຈົ້າຄອງນະຄອນຫລວງວຽງຈັນ,**
**ຫົວຫນ້າຄະນະສະເພາະກິດ ຂັ້ນນະຄອນຫລວງວຽງຈັນ.**

**ສິນລາ ສິດທິລືໄຊ**

ບ່ອນນຳສົ່ງ:

- ເຈົ້າຄອງ-ຮອງເຈົ້າຄອງ ນວ 04 ສະບັບ.
- ຄະນະສະເພາະກິດ ຂັ້ນສູນກາງ 01 ສະບັບ.
- ສະພາປະຊາຊົນ ນວ 01 ສະບັບ.
- ບັນດາພະແນກ-ອົງການ ນວ ພາກສ່ວນລະ 01 ສະບັບ.
- ບັນດາເມືອງ 01 ສະບັບ.
- ເກັບມ້ຽນ 02 ສະບັບ.